ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 196 /ຈທວ

ທີ່ ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2024

# ແຈ້ງການ

ຮຽນ : - ບັນດາພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ;

- ທ່ານ ນາງ ລີ ດົງລານ (Li Donglan);
- ທ່ານ ຢາງບິນ (Yang Bin).

ເລື່ອງ: ລົບລ້າງໃບທະບຽນວິສາຫະກິດຂອງ ບໍລິສັດ ລາວ-ຢຸນນານຜູຫົງ ການລົງທຶນພະລັງງານ ຈຳກັດຜູ້ດຽວ ສະບັບເລກທີ 2950/ຈທວ, ລົງວັນທີ 28/09/2023.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26/12/2013;
- ອີງຕາມ ການຊີ້ນຳຂອງທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ລົງວັນທີ 19 ເມສາ 2024;
- ອີງຕາມ ຄຳພິພາກສາຂອງສານຂັ້ນອຸທອນ ສານປະຊາຊົນນະຄອນຫຼວງວຽງຈັນ ສະບັບເລກທີ 68/ອທ.ພ, ລົງວັນທີ 21 ທັນວາ 2023.

ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ແຈ້ງໃຫ້ບັນດາພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ ແລະ ບຸກຄົນທີ່ກ່ຽວຂ້ອງ ຊາບ ດັ່ງນີ້:

1. ລົບລ້າງໃບທະບຽນວິສາຫະກິດ ຂອງບໍລິສັດ ລາວ-ຢຸນນານຜູຫົງ ການລົງທຶນພະລັງງານ ຈຳກັດຜູ້ດຽວ ສະບັບເລກທີ 2950/ຈທວ, ລົງວັນທີ 28/09/2023 ເນື່ອງຈາກ ຄຳພິພາກສາຂອງສານຂັ້ນອຸທອນ ສານປະຊາຊົນນະຄອນຫຼວງວຽງຈັນ ສະບັບເລກທີ 68/ອທ.ພ, ລົງວັນທີ 21 ທັນວາ 2023 ໄດ້ພິພາກສາລົບລ້າງຄຳຕັດສິນ ສະບັບເລກທີ 27/ຂຕ.ພ, ລົງວັນທີ 21 ກັນຍາ 2023 ຂອງສານປະຊາຊົນເຂດ 3 ນະຄອນຫຼວງວຽງຈັນ ຖິ້ມທັງໝົດ ແລ້ວສົ່ງສຳນວນຄະດີແພ່ງເລື່ອງນີ້ ໃຫ້ສານຂັ້ນຕົ້ນຄະນະໃໝ່ ພິຈາລະນາຄືນໃໝ່ ໃຫ້ຖືກຕ້ອງຕາມກົດໝາຍ". ສຳລັບ ຜົນຂອງການລົບລ້າງດັ່ງກ່າວ ແມ່ນເຮັດໃຫ້ໃບທະບຽນວິສາຫະກິດ ສະບັບເລກທີ 2429/ຈທວ, ລົງວັນທີ 27/10/2022 ມີຜົນສັກສິດນຳໃຊ້ຄືນ.

2. ພາຍຫຼັງໄດ້ພິຈາລະນາຄືນໃໝ່ ແລະ ມີຄຳຕັດສິນ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຕາມກົດໝາຍແລ້ວ ຫາກມີເນື້ອໃນທີ່ຕິດພັນກັບການປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນໃຫ້ອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຈ້ງເປັນລາຍລັກອັກສອນ ສົ່ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນວິສາຫະກິດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບດ້ວຍ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ